**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ຫ້ອງການ

ເລກທີ 0636 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 26.ມີນາ.2020

## ແຈ້ງການ

**ເຖິງ :** ຫົວໜ່ວຍຖືບັນຊີວິສາຫະກິດ ແລະ ວິສາຫະກິດ ບັນຊີ ແລະ ກວດສອບ.

**ເລື່ອງ:** ເລື່ອນເວລາການສົ່ງເອກະສານລາຍງານການເງິນ ແລະ ລາຍງານຜົນການເຄື່ອນໄຫວວຽກງານປະຈໍາປີ 2019.

- ອີງຕາມ ກົດໝາຍ ວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ມະຕິຂອງລັດຖະບານວ່າດ້ວຍການຮັບມື ກັບການລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກໂຄໂລນາສາຍພັນໃໝ່ ( COVID-19 ) ສະບັບເລກທີ 03/ລບ, ລົງວັນທີ 23 ມີນາ 2020;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງການເງິນ ສະບັບເລກທີ 2929/ກງ, ລົງວັນທີ 31 ສິງຫາ 2017;
- ອີງຕາມ ໃບສະເໜີ ຂອງກົມບັນຊີ ສະບັບເລກທີ..224../ກບຊ, ລົງວັນທີ..25..ມີນາ.2020

ຫ້ອງການ ກະຊວງການເງິນ ຂໍຖືເປັນກຽດ ແຈ້ງມາຍັງທ່ານຊາບ ກ່ຽວກັບ ການສົ່ງເອກະສານລາຍງານການເງິນ ແລະ ລາຍງານຜົນການເຄື່ອນໄຫວວຽກງານ ປະຈໍາປີ 2019, ໃຫ້ກົມບັນຊີ ກະຊວງການເງິນ, ຂະແໜງບັນຊີທີ່ຂຶ້ນກັບພະແນກການເງິນນະຄອນຫຼວງ ແລະ ແຂວງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 48 ຂອງກົດໝາຍວ່າດ້ວຍການບັນຊີ. ຍ້ອນສະພາບການແຜ່ລະບາດ ຂອງເຊື້ອພະຍາດອັກເສບປອດຈາກ ໄວຣັສສາຍພັນໃໝ່ ( COVID- 19 ) ຢູ່ ສປປລາວ ໃນປັດຈຸບັນ. ຫ້ອງການ ກະຊວງການເງິນ ຈຶ່ງແຈ້ງມາຍັງທ່ານ ເລື່ອນເວລາການສົ່ງເອກະສານລາຍງານການເງິນ ແລະ ລາຍງານຜົນການເຄື່ອນໄຫວວຽກງານ ປະຈໍາປີ 2019 ອອກໄປຈົນເຖິງວັນທີ 30 ເມສາ 2020. ຖ້າຫາກວ່າສະພາບແຜ່ລະບາດ ຂອງເຊື້ອພະຍາດດັ່ງກ່າວໃນປະເທດ ຍັງບໍ່ດີຂຶ້ນ ຫ້ອງການກະຊວງການເງິນ ຈະອອກແຈ້ງການເພີ່ມຕື່ມອີກ, ແຈ້ງການໃດທີ່ຂັດກັບແຈ້ງການສະບັບນີ້ ແມ່ນຖືກຍົກເລີກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການກະຊວງ**

ຫ້ອງການ

ນ.ຄໍາຂວັນ ສີຊານິນ